**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

1059-3

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ: /ຫກ

ຫ້ອງການກະຊວງ ນະຄອນຫຼວງວຽງຈັນ, ວັນທີ: 06/04/2026

## ໜັງສືແຈ້ງເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

1. ກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ໂຄງການ ເສີມສ້າງທັກສະທີ່ເປັນບູລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ, ໄດ້ຮັບອະນຸມັດງົບປະມານ ປະຈໍາສົກປີ 2026 **ເພື່ອດໍາເນີນການຈັດຊື້ ສະໜອງອຸປະກອນສ້ອມແປງ ແລະ ອຸປະກອນການກະເສດ ສໍາລັບປະກອບອາຊີບອິດສະລະ** ດ້ວຍການປະມູນ ແບບເປີດກວ້າງ.
2. ໄລຍະເວລາໃນການສົ່ງມອບ ຫລື ການບໍລິການ ແມ່ນ: [**90 ວັນ**].
3. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນພາຍໃນຕາມທີ່ໄດ້ລະບຸໄວ້ໃນ ຄູ່ມືແນະນໍາ: ຂອງທະນາຄານໂລກ ວ່າດ້ວຍຫລັກການການຈັດຊື້ຈັດຈ້າງສໍາລັບປະເທດຜູ້ກູ້ຢືມ **Procurement Regulations for IPF Borrowers fifth edition September 2023 (https://thedocs.worldbank.org/en/doc/6c0602876d68949e80820507d90a14ed-0290012023/original/Procurement-Regulations-September-2023.pdf)** ແລະ ເປີດໃຫ້ຜູ້ປະມູນທຸກໆຄົນ ທີ່ມີຄວາມເໝາະສົມຕາມຂໍ້ແນະນໍາວ່າດ້ວຍການຈັດຊື້-ຈັດຈ້າງ. ພ້ອມກັນນັ້ນ, ໃຫ້ເບິ່ງຫຍໍ້ໜ້າ 3.15, 3.18 ແລະ 3.19 ທີ່ກໍານົດໄວ້ໃນນະໂຍບາຍຂອງທະນາຄານໂລກ ວ່າດ້ວຍການມີຜົນປະໂຫຍດຊໍ້າຊ້ອນ.
4. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ໂຄງການ ເສີມສ້າງທັກສະທີ່ເປັນບູລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ, ເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມເຂົ້າຍື່ນຊອງປະມູນ **ການຈັດຊື້ ສະໜອງອຸປະກອນສ້ອມແປງ ແລະ ອຸປະກອນການກະເສດ ສໍາລັບປະກອບອາຊີບອິດສະລະ.**
5. ບໍລິສັດທີ່ມີຄວາມເໝາະສົມ ອາດສາມາດຂໍຮັບຂໍ້ມູນຈາກ ກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, **ບ້ານ ໂພນສະຫວ່າງ ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໂທລະສັບ 020 56644188, 020 29773848**
   Email: psgproject.proc@gmail.com;
   cc: phetchinda2016@hotmail.com sing_shl27@hotmail.com ແລະ ກວດກາເອກະສານປະມູນໃນເວລາໂມງການ.
6. ຊອງປະມູນຈະຕ້ອງສົ່ງຫາ, **ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຫ້ອງປະຊຸມ ຊັ້ນ 3) ບ້ານ ໂພນສະຫວ່າງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ.** ໃນວັນທີ ຫລື ກ່ອນ **04 ພຶດສະພາ 2026, ເວລາ.09:00 ໂມງ.** ການສົ່ງດ້ວຍລະບົບເອເລັກໂຕຼນິກ ຈະບໍ່ອະນຸຍາດ. ຊອງປະມູນທີ່ສົ່ງຊ້າ ຈະຖືກປະຕິເສດ. ການເປີດຊອງປະມູນ ຈະເປີດຕໍ່ໜ້າສາທາລະນະ ໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈຢາກເຂົ້າຮ່ວມຢູ່ສະຖານທີ່ງກໍານົດໄວ້ຂ້າງລຸ່ມນີ້
7. ທຸກໆເອກະສານ **ຈະຕ້ອງປະກອບການຄໍ້າປະກັນການປະມູນດ້ວຍກຽດ.**

**ຫົວໜ້າຫ້ອງການ**
**(ຫົວໜ້າໂຄງການ)**

ຫ້ອງການ

**ບຸນຍອດ ຈັນທະວອນ**